# ບົດທີ 25

# ຄຣິດສະຕະຈັກໃໝ່ຈະເກີດມີຂຶ້ນມາຢ່າງໃດ?



*ດຽວນີ້ເຮົາຈະເລີ່ມຕົ້ນຮຽນບົດສຸດທ້າຍໃນເຫຼັ້ມທີ 3 ນີ້*
*ຫວັງວ່າສິ່ງທີ່ທ່ານຮຽນມາແລ້ວນັ້ນຈະປະຕິບັດຕາມດ້ວຍ.*

**1** ເປັນພາລະຂອງຄຣິດສະຕຽນທຸກໆຄົນທີ່ຈະປ່າວປະກາດຂ່າວປະເສີດໃນບ້ານເກີດເມືອງນອນ ແຕ່ນອກຈາກນັ້ນ ຍັງມີພາລະອີກປະການໜຶ່ງດ້ວຍ. ໃຫ້ອ່ານ ມທ 28:18-20 ພາລະທີສອງນັ້ນຄືຫຍັງ? (ເລືອກ)

ກ. ຮັກສາບໍລິເວນອ້ອມວິຫານໃຫ້ສະອາດດີ.

ຂ. ປ່າວປະກາດໄປເຖິງທຸກຊາດ.

ຄ. ກໍ່ສ້າງວິຫານໃຫ້ຈົບງາມດີ.

**2** ໃນລາຍຊື່ຕໍ່ໄປນີ້ໃຫ້ທ່ານໝາຍຂ້າງປະໂຫຍກໃດທີ່ເປັນວິທີເໝາະສົມປ່າວປະກາດຂ່າວປະເສີດຂອງ ພະເຍຊູ.

ກ. ໃຫ້ສວຍໂອກາດປ່າວປະກາດກັບເຜົ່າອື່ນ ໆ ຫຼື ໃນແຂວງ ອື່ນ ໆ ທີ່ບໍ່ມີຄຣິດສະຕຽນເທື່ອ.

ຂ. ໃຫ້ປ່າວປະກາດຕໍ່ຄົນໃນບ້ານເຮົາແລ້ວໃຫ້ເຂົາມາຮ່ວມໃນທີ່ປະຊຸມນະມັດສະການຂອງເຮົາ.

ຄ. ໃຫ້ປ່າວປະກາດກັບຍາດພີ່ນ້ອງຂອງເຮົາເຖິງເຂົາຈະໄປຢູ່ບ້ານເມືອງອື່ນກໍ່ຕາມ.

ງ. ເຫັນບ່ອນໃດທີ່ມີຄຣິດສະຕຽນ 1 ຫຼື 2 ຄອບຄົວເຮົາອາດຈະສົ່ງເສີມເຂົາໃຫ້ປ່າວປະກາດແກ່ຄົນທີ່ບໍ່ເປັນຄຣິດສະ ຕຽນເທື່ອຈົນກວ່າຈະມີຫຼາຍຄົນມາຮ່ວມນະມັດສະການ ພະເຈົ້າອີງທ່ຽງແທ້ໃນປະຊຸມກັບເຮົາໄດ້.

**3** ຖ້າວ່າເຮົາຈະປ່າວປະກາດໃນບ້ານເຮົາເປົ້າໝາຍຄືຈະໃຫ້ຄົນໃດທີ່ຮັບເຊື່ອໃໝ່ມາເຂົ້າຮ່ວມປະຊຸມກັບເຮົາແຕ່ ຖ້າຫາກເຮົາຈະປ່າວປະກາດໃນບ່ອນທີ່ບໍ່ມີຄຣິດສະຕຽນເທື່ອເປົ້າໝາຍສຸດທ້າຍເຮົາຄືຈະເລີ່ມຕົ້ນຕັ້ງຫຍັງໄວ້? ______________________________

**4** ກ. ຖ້າວ່າເຮົາຈະປ່າວປະກາດໃນບ້ານຂອງເຮົາເອງເຮົາມີເປົ້າໝາຍວ່າຈະນຳຄົນມາເຊື່ອແລະຟັງຄວາມຂອງ ພະ ເຢຊູ ແລ້ວຕໍ່ໄປຈະໃຫ້ເຂົາມາຫຍັງ? ____________________

ຂ. ຄັນເຮົາປ່າວປະກາດໃນບ່ອນທີ່ບໍ່ມີຄຣິດສະຕຽນເທື່ອ ເຮົາມີເປົ້າໝາຍວ່າຈະນຳຄົນມາຮັບເອົາ ພະເຢຊູ ແລ້ວ ຕັ້ງໃຫ້ ມີຫຍັງໄວ້? ____________________________

**5** ກ. ຄຣິດສະຕຽນມີຈຸດປະສົງສອງປະການໃດໃນການປ່າວປະກາດຢູ່ບ້ານ? __________

______________________________________________________

ຂ. ຄຣິດສະຕຽນມີຈຸດປະສົງສອງປະການໃດໃນການປ່າວປະກາດໃນບ່ອນໃໝ່ທີ່ບໍ່ເຄີຍມີຄຣິດສະຕຽນ? ______________________________________________

## ການສວຍໂອກາດຕັ້ງຄຣິດສະຕະຈັກໄວ້

*ໃນບົດຮຽນກ່ອນທ່ານໄດ້ຮຽນເລື່ອງການສວຍໂອກາດປ່າວປະກາດຂ່າວປະເສີດ. ໃນບົດຮຽນນີ້ເຮົາຈະຮຽນເລື່ອງການສວຍໂອກາດຕັ້ງຄຣິດສະຕະຈັກໄວ້ເພື່ອເປັນທີ່ປະຊຸມນະມັດສະການໃນພະຄຳພີເຫັນມີຫຼາຍເທື່ອທີ່ ພະເຈົ້າເປີດໂອກາດເຫດການເຫຼົ່ານັ້ນປະກົດມາໃນພະທຳກິດຈະການເປັນຕົ້ນ.*

**6** ກ. ໃນກິຈະການ 1:8 ພະເຢຊູ ສັ່ງໃຫ້ເຂົາອອກຈາກເຢລູຊາເລັມໄປປະກາດໃນສອງແຂວງໃດ? ______________________________________________

ຂ. ໃນ ກຈກ 8:1 ພວກລູກສິດຖືກການຂົ່ມເຫັງແລ້ວແຕກກະຈະກະຈາຍໄປສອງແຂວງໃດ?

______________________________________________________

ຄ. ໃນ ກຈກ 8:4 ເຂົາພາກັນເຮັດຫຍັງ? ____________________________

ແມ່ນການຂົ່ມເຫັງ ຈາກຈັກກະພັດໂລມແລະພວກນັກທຳສາດສະໜາຢິວທີ່ເຮັດໃຫ້ເຂົາແຜ່ຂ່າວປະເສີດອອກໄປ.

**7** ກ. ເຂົາໄປປ່າວປະກາດໃນແຂວງທີ່ເຂົາຢູ່ແລະແຂວງຕໍ່ໄປດ້ວຍ ຄືແຂວງໃດແດ່? ______

ຂ. ເພາະມີເຫດການໃດທີ່ເຮັດໃຫ້ເຂົາອອກໄປ? ________________________

*ແຕ່ເຂົາຍັງຢູ່ໃນເຂດແດນປາແລັດສະຕິນບໍ່ເຖິງທີ່ສຸດປາຍແຜ່ນດິນໂລກເທື່ອ*

**8** ໃນບົດກ່ອນທ່ານໄດ້ຮຽນເລື່ອງຜູ້ໃດທີ່ຈະເອົາຂ່າວປະເສີດໄປເຖິງປະເທດເອທີໂອເປຍໃນທະວີບອາຟາລິກາ?__________________________________________

**9** ດັ່ງນັ້ນພະເຈົ້າໃຊ້ການຂົ່ມເຫັງໃຫ້ລູກສິດເອົາຂ່າວປະເສີດໄປເຖິງສອງແຂວງໃດໃນປະເທດປາແລັດສະຕິນ? ________________________________________

**10** ພະອົງໃຊ້ຄົນເດີນທາງໃນລົດມ້າເອົາຂ່າວປະເສີດໄປເຖິງປະເທດໃດ? _______________
ຢູ່ທະວີບໃດ? ________________________________________________

**11** ໃນ ກຈກ 16:9-10 ໂປໂລ ເຫັນການນິມິດໃຫ້ໄປປ່າວປະກາດຢູ່ໃສ? _______________
ມາເກໂດເນຍນັ້ນຢູ່ປະເທດກະເລັກຂອງທະວີບຢູໂຣບ.

**12** ໃນກຈກ ບົດ 25-28 ເວົ້າເຖິງອາຈານ ໂປໂລ ໄປກຸງໂລມ.
ກ. ເຫັນໃນ ກຈກ 27:1 ໂປໂລ ໄປໃນສະພາບຖານະໃດ? ________________________
ຂ. ໃນ ກຈກ 28:30-31 ໂປໂລ ໄປເຖິງແລ້ວເພິ່ນເຮັດຫຍັງ? ______________________
ດັ່ງນັ້ນເຫັນວ່າມີຄຶດສະຕະຈັກຕັ້ງໄວ້ໃນຫຼາຍບ່ອນດ້ວຍຫຼາຍເຫດ.

**13** ເຮົາເຫັນວ່າມີຄຶດສະຕຽນແຜ່ອອກໄປແລ້ວມີຄຶດສະຕະຈັກຕັ້ງໄວ້ໃນຫຼາຍແຫ່ງເພາະເຫດການ
ຕໍ່ໄປນີ້:
ກ. ໃນແຂວງຢູດາ ແລະ ຊາມາເລຍ ເພາະມີເຫດການໃດ? ______________________
ຂ. ໃນປະເທດເອທິໂອເປຍທະວີບອາຟາລິກາເພາະເຫດການໃດ? _______________
ຄ. ໃນມາເກໂດເນຍທະວີບຢູໂຣບເພາະເຫດການໃດ? __________________________
ງ. ໃນກຸງໂລມດ້ວຍເຫດໃດ? ____________________________________________

**14** ແຕ່ຍັງມີຢູ່ອີກດ້ວຍໃຫ້ທ່ານອ່ານຈາກ ກຈກ 15:36-41 ໂປໂລ ແລະ ບາລະນາບາ ຈະອອກ
ໄປໜຸນໃຈຄຶດສະ ຕຽນທີ່ເຂົາປະກາດມາແລ້ວ.
ກ. ຜົນສຸດທ້າຍເກີດມີຫຍັງ ໃນຂໍ້ 39? ____________________________________
ຂ. ການຖົກຖຽງລະຫວ່າງລູກສິດຂອງພະອົງເປັນການເໝາະສົມບໍ່? _______________
ຄ. ແຕ່ເຖິງຈະແມ່ນຄວາມຄຽດຂອງມະນຸດກໍ່ຕາມ ພະເຈົ້າຈະປີ້ນຄວາມຄຽດນັ້ນມາສັນລະ
ເສີນພະອົງໄດ້. ແທນ ທີ່ໂປໂລ ແລະ ບາລະນາບາ ສອງຄົນອອກໄປໜຸນໃຈຄຶດສະຕະຈັກ
ຜົນສຸດທ້າຍມີຈັກຄົນໄປ?_____________________________________________
ເປັນຜົນດີເພາະແທນທີ່ຈະມີຄູ່ດຽວໄປແຕ່ກັບມີສອງຄູ່.

**15** ກ. ໂປໂລ ແລະ ຊີລາແຍກຈາກ ບາລະນາບາແລະໂຢຮັນມາລະໂກ ເພາະ ພະເຈົ້າບອກໃຫ້
ເຂົາແຍກ ເປັນສອງ ຈຸ ນັ້ນແມ່ນບໍ່? ____________________________________
ຂ. ເຂົາແຍກເປັນຄູ່ໄປຄົນລະທາງເພາະເຫດໃດ? ____________________________
ຄ. ແຕ່ຜົນສຸດທ້າຍຄຶດຕຽນໃນເກາະກຸບໂລ ກໍ່ໄດ້ຮັບ ແລະ ຄຶດສະຕະຈັກໃນແຂວງຊີເລຍກັບ
ແຂວງກີລີເກຍກໍ່ໄດ້ ຮັບການໜຸນໃຈເພາະ ໂປໂລ ແລະ ບາລະນາບາ ແຍກທາງກັນໄປຈັກ
ເສັ້ນທາງ? ________________________________________________
ງ. ດັ່ງນັ້ນຄວາມຄຽດຂອງມະນຸດກາຍເປັນການສັນລະເສີນໃຜ? __________________

**16** ເຫັນວ່າມີຄຼິດສະຕະຈັກແຜ່ຂະຫຍາຍອອກຫຼາຍເພາະ 5 ເຫດຕໍ່ໄປນີ້ຄື:

ກ. ການຂົ່ມ ______________________________________________

ຂ. ຄົນເດີນ ______________________________________________

ຄ. ການ ___________________________________ ທີ່ອາຈານ ໂປໂລ ເຫັນ.

ງ. ອາຈານໂປໂລ ໄປກຸງໂລມໃນສະພາບເປັນ __________________

ຈ. ເພາະການ ________________________ ລະຫວ່າງ ໂປໂລ ແລະ ບາລະນາບາ.

**17** ໃຫ້ທ່ານໝາຍ √ ໃສ່ຂໍ້ໃດ ທີ່ສະແດງເຖິງເຫດຄວາມຄຽດຂອງມະນຸດ.

_____ກ. ການຂົ່ມເຫັງ. ______ ຂ. ການເດີນທາງ.

_____ຄ. ການເຫັນນິມິດ. ______ ງ. ການເປັນນັກໂທດ.

_____ຈ. ການຖົກຖຽງກັນ.

**18** ກ. ບາງເທື່ອ ພະເຈົ້າໃຊ້ຄວາມຄຽດຂອງໃຜມາສັນເສີນ ພະເຈົ້າ? __________

ຂ. ບາງເທື່ອ ພະເຈົ້າ ໃຊ້ຄວາມຄຽດຂອງໃຜມາເປີດໂອກາດໃຫ້ຄຼິດສະຕະຈັກແຜ່ອອກ? __

**19** ຖ້າວ່າເຮົາສວຍໂອກາດຕັ້ງຄຼິດສະຕະຈັກໄວ້ ພະເຈົ້າອາດຈະເປີດໂອກາດດ້ວຍເຫດການຢ່າງໃດແດ່

ກ. ______________________________________________

ຂ. ______________________________________________

ຄ. ______________________________________________

ງ. ______________________________________________

ຈ. ______________________________________________

*ໂອກາດທີ່ ພະເຈົ້າຈະເປີດໃຫ້ມີຄຼິດສະຕະຈັກຕັ້ງໄວ້ນັ້ນ ບໍ່ຈຳກັດກັບເຫດການ 5 ປະການ ທີ່ສະເໜີມາແລ້ວ ເພາະ 5 ປະການນັ້ນພຽງແຕ່ສະເໜີວ່າ ພະເຈົ້າຈະເປີດໂອກາດໂດຍວິທີທາງຫຼາຍເສັ້ນ ພະເຈົ້າໃຊ້ອຸປະສັກໃດອຸປະສັກໜຶ່ງກໍ່ໄດ້ ຫຼື ໃຊ້ຄວາມສະດວກສະບາຍກໍ່ໄດ້.*

## ບາດກ້າວທີ 1

<u>ຈະຕັ້ງໄວ້ຢູ່ໃສໄດ້.</u>

*ຖ້າວ່າຈະຊອກຫາບ່ອນຕັ້ງຄຼິດສະຕະຈັກໄວ້ຄຳຕອບທີ່ງ່າຍຄື: ບ່ອນໃດທີ່ ພະເຈົ້າ ເປີດໃຫ້ມີໂອກາດແຕ່ຍັງມີເງື່ອນໄຂຢູ່ດ້ວຍ ໃນຄຳອຸປະມາຂອງ ພະເຢຊູ ເລື່ອງຜູ້ຫວ່ານມີທັງດິນດີແລະດິນບໍ່ດີ.ທຳມະດາກົນທີ່ຢູ່ໃນ ສະພາບບ່ອນຢູ່ບໍ່ແນ່ນອນ ຫຼື ບໍ່ຖາວອນ ພ້ອມໃຈທີ່ຈະຮັບຟັງຂ່າວປະເສີດຫຼາຍກວ່າຄົນທີ່ຢູ່ເປັນການຖາວອນ ຄືໃນບ້ານເກີດເມືອງນອນ. ພະເຢຊູ ບອກວ່າ "ຄົນຮັ່ງມີຈະເຂົ້າໄປໃນລາຊະແຜ່ນດິນສະຫວັນກໍ່ຍາກ" (ມທ 19:23).*

*ອາຈານ ໂປໂລ ຂຽນເລື່ອງຄົນທີ່ ພະເຈົ້າ ເອີ້ນໄວ້ວ່າ "ຄົນທີ່ມະນຸດຖືວ່າສະຫຼາດກໍ່ມີໜ້ອຍຄົນ ຄົນທີ່ມີອຳນາດກໍ່ມີໜ້ອຍຄົນຄົນທີ່ມີຖານະສູງກໍ່ມີໜ້ອຍຄົນ" (1 ກລທ 1:26) ປະກົດວ່າຜູ້ທີ່ສຳບາຍ*

*ຫຼາຍໃນໂລກນີ້ບໍ່ສົນໃຈກັບສະຫວັນຫຼາຍປານໃດ.*

**20** ຕາມຄຳສອນຂອງ ພະເຢຊູ ເປັນຢ່າງໃດ? (ເລືອກ)
ກ. ຄົນຮັ່ງມີນັ້ນ ບໍ່ມີຈັກຄົນເຂົ້າອານາຈັກສະຫວັນໄດ້.
ຂ. ຄົນຮັ່ງມີໜ້ອຍຄົນຈະເຂົ້າໃນອານາຈັກສະຫວັນ.
ຄ. ຄົນຮັ່ງມີສ່ວນຫຼາຍຈະເຂົ້າໄປໃນແຜ່ນດິນສະຫວັນ.

**21** ອາຈານ ໂປໂລ ຂຽນໄວ້ວ່າຢ່າງໃດ? (ເລືອກ)
ກ. ພະເຈົ້າເອີ້ນເອົາຜູ້ມີຖານະສູງຫຼາຍຄົນ.
ຂ. ພະເຈົ້າບໍ່ໄດ້ເອີ້ນເອົາຜູ້ມີຖານະສູງຈັກຄົນດຽວ.
ຄ. ພະເຈົ້າເອີ້ນເອົາຄົນທີ່ມີຖານະສູງໜ້ອຍຄົນ.

**22** ກ. ຈະມີຄົນຮັ່ງມີ ຫຼື ຄົນຖານະສູງໃນແຜ່ນດິນ ພະເຈົ້າ ບໍ່? ____________________
ຂ. ຄົນຮັ່ງມີຈະມີຫຼາຍປານໃດ? ____________________

**23** ຖ້າຢ່າງນັ້ນ ແມ່ນບ້ານໃດຕໍ່ໄປນີ້ທີ່ອາດຈະເປັນ "ດິນດີ" ເພື່ອຈະຕັ້ງວິຫານ ຫຼື ຄຼິດສະຕະຈັກ. (ເລືອກ)
ກ. ກຸ່ມທີ່ມີແຕ່ພວກຜູ້ນຳສ່ວນຫຼາຍ.
ຂ. ໝູ່ບ້ານຕັ້ງໃໝ່ທີ່ເອົາຄົນຈາກທີ່ອື່ນມາຕັ້ງເປັນສະຫະກອນ ຫຼືໜ່ວຍຜະລິດອັນນຶ່ງ
ຄ. ບ້ານທີ່ທຸກຫຼາຍເພາະເກີດມີໄພທຳມະຊາດລົບກວນ.
ງ. ບ້ານທີ່ອຸດົມສົມບູນບໍ່ເຄີຍຂາດຂອງກິນຈັກເທື່ອໄດ້ຫຼາຍປີມາແລ້ວ.

**24** ໃນການຕັ້ງຄຼິດສະຕະຈັກໄວ້ນັ້ນ ເຣື່ອນໄຂອັນສຳຄັນທີ່ສຸດຄືຫຍັງ? (ເລືອກ)
ກ. ເສດຖະກິດຈະດີ ຫຼື ບໍ່ດີກໍ່ໄດ້.
ຂ. ຄົນບ້ານນັ້ນອ່ານບໍ່ໄດ້ຂຽນບໍ່ເປັນ.
ຄ. ພະເຈົ້າ ເປີດໂອກາດທີ່ເຮົາຈະຊ່ວຍໄດ້ບໍ່.
ງ. ສະຖານະການໃນບ້ານນັ້ນຄົນຫຼາຍຫຼືບໍ່.

**25** ແຕ່ຍັງມີເຣື່ອນໄຂທີ່ບໍ່ຕາຍຕົວວ່າ ທຳມະດາຄົນໃດຈະມີຄວາມສົນໃຈເລື່ອງອານາຈັກສະຫວັນຫຼາຍ? (ເລືອກ)

ກ. ຄົນຮັ່ງມີ.
ຂ. ຄົນສະຫຼາດ.
ຄ. ຜູ້ມີອຳນາດ.
ງ. ຜູ້ມີຕຳແໜ່ງສູງ.
ຈ. ຄົນອ່ອນກຳລັງ.
ສ. ຄົນທີ່ມະນຸດຖືວ່າໂງ່.
ຊ. ຄົນທີ່ມະນຸດດູໝິ່ນ.
ຍ. ຜູ້ທີ່ຍາກຈົນ.

## ບາດກ້າວທີ 2

<u>ຈະຕິດຕໍ່ກັບໃຜກ່ອນ.</u>

*ຖ້າວ່າຈະເຂົ້າໄປໃນເຂດໃດ ທີ່ອາດຈະຕັ້ງຄຼິດສະຕະຈັກເປັນບ່ອນປະຊຸມຄຼິດສະຕຽນປະຈຳໄວ້ເຮົາຄວນຈະຕິດຕໍ່ກັບຄົນໃດກ່ອນ? ການນັ້ນກໍ່ບໍ່ຕາຍຕົວເໝືອນກັນ ແຕ່ຄັນ ພະເຈົ້າ ເປີດໂອກາດໄວ້ແລ້ວອາດຈະມີຄົນດັ່ງຕໍ່ໄປນີ້:*

*ຄຼິດສະຕຽນທີ່ເຄີຍຢູ່ຜູ້ດຽວ ດ້ວຍວ່າບໍ່ສາມາດເຂົ້າປະຊຸມກັບພີ່ນ້ອງຄຼິດສະຕຽນຢູ່ທີ່ອື່ນເພາະຢູ່ໄກ.*

*ຍາດຂອງຄຼິດສະຕຽນມາຈາກທີ່ອື່ນມາຢູ່ທີ່ນັ້ນ.*

*ຜູ້ທີ່ເຄີຍຟັງຂ່າວປະເສີດທາງວິທະຍຸ.*

*ຄົນທີ່ບໍ່ພໍໃຈດ້ານຈິດວິນຍານ (ບໍ່ພໍໃຈກັບສາດສະໜາເກົ່າເພາະຊ່ວຍໃຫ້ລອດພົ້ນບາບກໍາບໍ່ໄດ້)*

**26** ຄັນສັງເກດແລ້ວວ່າ ພະເຈົ້າ ໄດ້ເປີດໂອກາດໄວ້ໃຫ້ຕັ້ງທີ່ປະຊຸມຄຼິດສະຕຽນພວກທ່ານຈະເຮັດຢ່າງໃດກ່ອນ? (ເລືອກ)
ກ. ສ້າງວິຫານໄວ້ກ່ອນ.
ຂ. ໄປຢັ້ຽມຢາມບຸກຄົນໃດທີ່ສົນໃຈຮ່ວມຮຽນພະຄຳພີ.
ຄ. ຕິດປະກາດໄວ້ວ່າຈະເລີ່ມປະຊຸມ.
ງ. ຈັດງານບຸນໄວ້ກ່ອນ.

**27** ຖ້າວ່າທ່ານຈະໄປຢັ້ຽມຢາມຄົນ ຈະໄປຢັ້ຽມຄົນໃດ ໆ ກ່ອນ? (ເລືອກ)
ກ. ຜູ້ທີ່ເຄີຍສົນໃຈຟັງເລື່ອງຂ່າວປະເສີດທາງວິທະຍຸ.
ຂ. ຜູ້ທີ່ເປັນຄຼິດສະຕຽນແລ້ວ ແຕ່ບໍ່ມີໂອກາດໄປຮ່ວມປະຊຸມ.
ຄ. ຜູ້ທີ່ພໍໃຈກັບສາດສະໜາຜີ ສາດສະໜາພາມ ທີ່ບໍ່ຍອມຖິ້ມໃຈເກົ່າເອົາໃຈໃໝ່
ງ. ຜູ້ທີ່ມີຄວາມຫິວດ້ານຈິດວິນຍານ.
ຈ. ຜູ້ທີ່ຢູ່ສະບາຍບໍ່ເຄີຍທຸກລຳບາກ.
ສ. ຍາດຂອງຄຼິດສະຕຽນຈາກບ້ານອື່ນມາ.

**28** ຖ້າວ່າໄປຢັ້ຽມຢາມຄົນທີ່ອາດຈະສົນໃຈຮ່ວມຮຽນພະຄຳພີ ອາດຈະເລີ້ມສອນພະຄຳພີປະຈຳອາທິດໃນ ເຮືອນ ຄົນທີ່ສົນໃຈຄົນນັ້ງແລະໃນໂມງແລະວັນທີ່ຜູ້ສົນໃຈຈະມີເວລາວ່າງ. ຖ້າທ່ານຈະເລີ່ມຕົ້ນໄປຢັ້ຽມຢາມຄົນເໝາະສົມຈະໄປຫາຄົນທີ່ເປັນຢ່າງໃດ?
(ຕື່ມຄວາມທີ່ຂາດຕໍ່ໄປນີ້)
ກ. ຄຼິດສະຕຽນທີ່ບໍ່ມີ ______________________________
ຂ. ຍາດຂອງ ______________________________
ຄ. ຜູ້ທີ່ເຄີຍຟັງຂ່າວປະເສີດທາງ ______________________________
ງ. ຜູ້ທີ່ມີຄວາມຫິວດ້ານ ______________________________

**29** ຈຸດປະສົງທີ່ເຮົາໄປຢ້ຽມເຂົາປະການໜຶ່ງແມ່ນເພື່ອເລີ່ມຕົ້ນການຮຽນພະຄຳພີໃນເຮືອນຄົນໃດຄົນໜຶ່ງ. ຈຸດປະສົງອີກ ປະການໜຶ່ງເພື່ອເຮົາຈະຄຸ້ນເຄີຍກັບເຂົາ ແຕ່ລະບຸກຄົນ.

ກ. ຢາໂກໂບ 1:27 ອ້າງເຖິງການຢ້ຽມຢາມໃຜ? ______________________________

ຂ. ໃນ ຢາໂກໂບ 2:14-18 ບອກຄວາມສຳພັນລະຫວ່າງຄວາມເຊື່ອແລະການປະຕິບັດ. ຄວາມເຊື່ອທີ່ແທ້ຈິງຈະມີຜົນສະແດງອອກຢ່າງໃດ? ________________________

**30** ການໄປຢ້ຽມຢາມຄົນມີຈຸດປະສົງສອງປະການໃດ? (ຕື່ມຄວາມທີ່ຂາດຕໍ່ໄປນີ້)

ກ. ເພື່ອຫາໂອກາດເລີ່ມຕົ້ນການ ________________________________________

ຂ. ເພື່ອຈະ ________________________________________ ກັບບຸກຄົນເຫຼົ່ານັ້ນ.

**31** ກ. ຖ້າວ່າຄຼິດສະຕຽນເຫັນຄົນໃດທີ່ຂາດເຄື່ອງນຸ່ງ ສົມຄວນຈະເຮັດຫຍັງ? ____________

ຂ. ເຫັນຄົນຂາດອາຫານເດ? ___________________________________________

**32** ໃນປະໂຫຍກຂ້າງຊ້າຍຕໍ່ໄປນີ້ ມີລາຍຊື່ຄວາມຕ້ອງການທີ່ອາດຈະພົບໃນຄົນທີ່ຈະໄປຢ້ຽມຢາມ ແລະ ຢູ່ຂ້າງຂວາ ມີລາຍຊື່ສິ່ງຕ່າງໆທີ່ເຮົາອາດຈະຊ່ວຍເຂົາໄດ້ໃຫ້ທ່ານເອົາເລກທີ່ຢູ່ຂ້າງຂວາມາຈັບຄູ່ໃຫ້ຖືກກັບ ຄວາມຕ້ອງການຂອງຄົນທີ່ຢູ່ ຂ້າງຊ້າຍ.

| | |
|---|---|
| _____ກ. ຄົນຢູ່ຜູ້ດຽວບໍ່ມີຍາດ. | 1. ສອນໃຫ້ເຂົາອ່ານ ຫຼື ອ່ານຈົດໝາຍໃຫ້. |
| _____ຂ. ຜູ້ທີ່ອ່ານບໍ່ເປັນ. | 2. ປຶກສາກັບເຂົາ. |
| _____ຄ. ຄົນເຈັບໄຂ້. | 3. ອ້ອນວອນຂໍ ພະເຈົ້າ ຊ່ວຍໃຫ້ເຂົາດີແລະ ຊ່ອຍພາເຂົາໄປຫາໝູ່ດ້ວຍ |
| _____ງ.ຄົນທີ່ບໍ່ມີອັນຈະກິນ. | 4. ໄປຢ້ຽມເຂົາແລະເປັນເພື່ອນກັບເຂົາ. |
| _____ຈ.ຜູ້ທີ່ຜິດໃຈກັນໃນຄອບຄົວຫຼາຍ. | 5. ຫາຂອງກິນໃຫ້. |

**33** ຫຼັງຈາກພວກທ່ານໄດ້ ໄປຢ້ຽມຢາມຫຼາຍຄົນແລະຮູ້ຈັກເຂົາດີແລ້ວ ພວກທ່ານອາດຈະເລີ່ມຕົ້ນສຶກສາພະຄຳພີປະ ຈຳບ້ານແລະຕໍ່ໄປຈຶ່ງຕັ້ງການນະມັດສະການວັນອາທິດໃນສະຖານທີ່ໃດທີ່ໜຶ່ງ ຫຼື ເຮືອນໃດທີ່ເໝາະສົມ. ການສຶກສາພະຄຳພີປະຈຳບ້ານອາດຈະເລີ່ມຕົ້ນດ້ວຍບໍ່ມີຄຳອ້ອນວອນ ຫຼື ເພງສັນລະເສີນພະເຈົ້າ ເທື່ອຕໍ່ໆໄປຖ້າວ່າຄົນສ່ວນຫຼາຍ ມາຮັບເຊື່ອເປັນຄຼິດສະຕຽນແລ້ວເຂົາຢາກຮ້ອງເພງສັນລະເສີນພະເຈົ້າແລະ ອ້ອນວອນດ້ວຍກັນ.

ກ. ຄັນມີຄຼິດສະຕຽນພໍແລ້ວຈະເລີ່ມຕົ້ນປະຊຸມຢ່າງໃດ? ________________________

ຂ. ໃນວັນໃດ? ___________________________________________________

**34** ຖ້າ ພະເຈົ້າ ເປີດໂອກາດຕັ້ງຕົ້ນຄຼິສະຕະຈັກໃໝ່ໄວ້ ທ່ານອາດຈະຄົ້ນຄິ້ວສອງປະການໃດກ່ອນ? (ຕື່ມຄວາມທີ່ຂາດ)

ບາດກ້າວທີ 1. ຈະ ____________ ຢູ່ໃສ?

ບາດກ້າວທີ 2. ຈະ ____________ ກັບ ____________ ກ່ອນ.

ແລ້ວຕໍ່ໄປກໍ່ມີອີກບາດກ້າວອີກຄື:

## ບາດກ້າວທີ 3

ສ້າງໃຫ້ຄຼິດສະຕຽນຈະເລີນເຂັ້ມແຂງຂຶ້ນໃນຄວາມເຊື່ອ.

**35** ຈຸດປະສົງໃນການປະກາດພະທຳໃນບ່ອນໃໝ່ຄື: ຈະໃຫ້ຄົນຮັບເຊື່ອໃນ ພະເຢຊູ.
ໃຫ້ອ່ານ ໂລມ 10:17

ກ. ຄວາມເຊື່ອເກີດມາໄດ້ເພາະຫຍັງ? ____________________________________

ຂ. ການໄດ້ຍິນເກີດມາໄດ້ເພາະການປະກາດເລື່ອງຫຍັງ? ________________________

"ເລື່ອງ ພະຄຼິດ" ນັ້ນອາດຈະແມ່ນຄຳເທດສະໜາພະທຳກໍ່ໄດ້ ຫຼື ຄຳພິຍານຂອງຄຼິດສະຕຽນກໍ່ໄດ້.

**36** ໃນເມື່ອເຮົາຈະເລີ່ມຕົ້ນປ່າວປະກາດໃນເຂດໃໝ່ເປັນການເໝາະສົມທີ່ຈະອະທິບາຍເລື່ອງການລອດພົ້ນບາບ ໂດຍເຊື່ອວາງໃຈໃນ ພະເຢຊູ. ເລື່ອງນັ້ນທ່ານຮຽນຮູ້ມາແລ້ວຈຶ່ງຈະກ່າວຕໍ່ຄົນທີ່ບໍ່ເຊື່ອໃຫ້ເຂົາຟັງໄດ້. ໃນເຫຼັ້ມທີ 3 ນີ້ ບົດທີ 23ທ່ານໄດ້ຮຽນຮູ້ເລື່ອງຈຸດສຳຄັນໃນການເລົ່າເລື່ອງຂ່າວປະເສີດຂໍໃຫ້ທ່ານຂຽນມາໃນບ່ອນວ່າງຕໍ່ໄປນີ້:

1. ________________________________________________________________
2. ________________________________________________________________
3. ________________________________________________________________
4. ________________________________________________________________

**37** ທຸກເທື່ອທີ່ເຮົາຈະສະເໜີຂ່າວປະເສີດໃຫ້ຄົນໜຶ່ງຄົນໃດຟັງສຳເລັດເຮົາສົມຄວນຈະຮ້ອງຂໍໃຫ້ຜູ້ຟັງເຮັດຫຍັງ ຕໍ່ໄປ? ______________________________________________

**38** ຄຳວ່າ "ລູກສິດ" ໃນພວກຄຼິດສະຕຽນມີຄວາມໝາຍວ່າແນວໃດ ຕໍ່ໄປນີ້? (ເລືອກ)

ກ. ຜູ້ທີ່ຮຽນຮູ້ທັງໝົດເລື່ອງຊີວິດຄຼິດສະຕຽນແລະເລື່ອງພະຄຳພີສຳເລັດແລ້ວ.

ຂ. ຜູ້ທີ່ຍັງຈະຮຽນຮູ້ເລື່ອງຊີວິດຄຼິດສະຕຽນແລະເລື່ອງພະຄຳພີ.

ຄ. ແຕ່ເດັກທີ່ເຂົ້າຮຽນ ປະຖົມສຶກສາ ຢ່າງດຽວ.

ງ. ຜູ້ເປັນຄຼິດສະຕຽນໃໝ່ຈະສອນເລື່ອງຊີວິດເກົ່າກ່ອນທີ່ຈະຮັບເອົາ ພະເຢຊູ.

**39** ການສ້າງຄຼິດສະຕຽນໃໝ່ໃຫ້ກ້າວໜ້າບໍ່ເປັນການງ່າຍດອກ ເຂົາຍັງຕ້ອງຮຽນຮູ້ຫຼາຍແລະຜູ້ທີ່ຈະແນະນຳເຂົາຈຳ ເປັນຕ້ອງມີໃຈອົດທົນແລະຊື່ສັດແຕ່ເຖິງຢ່າງໃດກໍ່ຕາມເປັນພາລະທີ່ມີຄຸນຄ່າມະຫາສານ ຖ້າວ່າເຂົາເຊື່ອມາແລ້ວຕອນໃດທີ່ເໝາະສົມເຂົາຄວນຈະຮັບສິນບັບຕິສະມາ ແລະເຂົ້າເປັນສະມາຊິກຮ່ວມກັບພວກຄຼິດສະຕຽນແຕ່ຂໍ້ສຳຄັນທີ່ສຸດຄືໃຫ້ ເຂົາຮູ້ເລື່ອງຫຼັກຄວາມເຊື່ອ ຄຼິດສະຕຽນ. ໃນຄຳຂຽນ 3 ປະການຕໍ່ໄປນີ້ໃຫ້ທ່ານໝາຍໄວ້ອັນໃດທີ່ຖືກ.

_____ກ. ຄວນທີ່ຄຼິດສະຕຽນໃໝ່ຈະລໍຖ້າເປັນຫຼາຍໆເດືອນ ເພື່ອທົດລອງເຂົາກ່ອນຈະເລີ່ມຕົ້ນສອນຫຼັກ ຄວາມເຊື່ອຄຼິດ ສະຕຽນ.

_____ຂ. ຖ້າວ່າເຂົາເຊື່ອມາແລ້ວຄວນທີ່ຈະເລີ່ມຕົ້ນສອນເຂົາເລື່ອງຫຼັກຄວາມເຊື່ອແລະຊີວິດຄຼິດສະຕຽນ ທັນທີ.

_____ຄ. ສົມຄວນຈະຮັບເຊື່ອດົນເຕີບກ່ອນຈະຮັບສິນໄດ້.

**40** ຄວນທີ່ຈະເລີ່ມຕົ້ນສອນຄຣິດສະຕຽນໃໝ່ໃນເວລາໃດ? ___________________________

**41** ຖ້າວ່າທ່ານຈະສອນຄຣິດສະຕຽນໃໝ່ ອາດຈະໃຫ້ຄົນຄຣິດສະຕຽນທີ່ມີຄວາມຮູ້ແລະຄວາມຊຳນານໃນຊີວິດຄຣິດສະ ຕຽນແລ້ວສອນກໍ່ໄດ້. ຄັນຢາກສອນຈາກປຶ້ມສອນມີຫຼັກສູດສອງເຫຼັ້ມທີ່ທ່ານອາດຈະເລືອກໄດ້ຄື: ຫຼັກສູດ "ຊີວິດຢ່າງຄົບບໍລິບູນ" ແລະອີກເຫຼັ້ມຄື "ບົດຮຽນສຳລັບຜູ້ທີ່ຢາກຮັບສິນບັບຕິສະມາ" ສົມຄວນທີ່ຈະສອນຄົນຄຣິດສະຕຽນໃໝ່ເພື່ອໃຫ້ເປັນຢ່າງໃດ?

___________________________________________________________________

ບາດກ້າວສຸດທ້າຍໃນການຕັ້ງຄຣິດສະຕະຈັກໃໝ່ແມ່ນ

## ບາດກ້າວທີ 4

<u>ການຕຽມຜູ້ນຳ.</u>

**42** ການສັ່ງສອນບໍ່ສຸດກັບຜູ້ມາເປັນຄຣິດສະຕຽນໃໝ່ໃຫ້ຮັບສິນບັບຕິສະມາແລະເຂົ້າຮ່ວມກັບຄຣິດສະຕະຈັກຢ່າງດຽວ. ບາດກ້າວ ທີ່ທ່ານໄດ້ຮຽນຮູ້ມາແລ້ວມີດັ່ງຕໍ່ໄປນີ້:

ບາດກ້າວທີ 1 ຈະ ____________________________________________

ບາດກ້າວທີ 2 ຈະ ____________________________________________

ບາດກ້າວທີ 3 ສ້າງ ___________________________________________

ບາດກ້າວທີ 4 ນີ້ຄື: ການ ______________________________________

**43** ໃນເອເຟໂຊ 4:11-13 ມີລາຍຊື່ຂອງປະທານທີ່ພະອົງປະທານໃຫ້ຄຣິດສະຕຽນເພື່ອ"ໃຫ້ເປັນຜູ້ຮັບໃຊ້ທີ່ເໝາະສົມ" ການນັ້ນໝາຍຄວາມວ່າໃນພວກຄຣິດສະຕຽນ ໃດ ໆກໍ່ຕາມ ຕ່າງຄົນກໍ່ຕ່າງມີພອນສະຫວັນແຕກຕ່າງກັນໄປຄົນ ລະຢ່າງແລະຜູ້ໃດທີ່ມອບຕົວໃຫ້ ພະເຈົ້າ ຜູ້ນັ້ນມີຂອງປະທານຢ່າງໜຶ່ງຢ່າງໃດ ເປັນການສົມຄວນທີ່ພວກທ່ານເຊິ່ງເປັນຜູ້ຫວ່ານ ໃນເຂດນັ້ນຈະອົບລົມພີ່ນ້ອງໃນຄຣິດສະຕະຈັກນັ້ນໃຫ້ຮູ້ພອນສະຫວັນຂອງໃຜລາວແລ້ວພັດທະນາພອນສະຫວັນນັ້ນໃຫ້ດີຂຶ້ນເພື່ອ ຈະໃຊ້ໃຫ້ເປັນປະໂຫຍດໃນຄຣິດສະຕະຈັກນັ້ນ ເພາະທ່ານເອງອາດຈະບໍ່ຢູ່ກັບເຂົາຢ່າງຖາວອນ. ແມ່ນຜູ້ໃດທີ່ສົມຄວນຈະເປັນຜູ້ນຳໃນຄຣິດສະຕະຈັກຕໍ່ໄປ? (ເລືອກ)

ກ. ຄົນທີ່ສຶກສາພະຄຳພີໃນຕ່າງປະເທດມາ.

ຂ. ໃຫ້ຄົນຍ້າຍຄຣິດສະຕະຈັກມາຮັບພາລະເປັນຜູ້ນຳ.

ຄ. ຄົນຈາກບ້ານນັ້ນທີ່ຮຽນພະຄຳພີໄດ້ດີ.

**44** ເປັນຫຍັງ ທີ່ຈະເອົາຄົນຈາກບ້ານນັ້ນເປັນຜູ້ນຳໃນຄຣິດສະຕະຈັກຈຶ່ງຈະດີ? (ເລືອກ)

ກ. ເພາະເພິ່ນລຶ້ງເຄີຍກັບຄົນໃນບ້ານນັ້ນ.

ຂ. ເປີດໃຫ້ຄົນທີ່ມາຕັ້ງຄຣິດສະຕະຈັກໄວ້ມີໂອກາດຕັ້ງຄຣິດສະຕະຈັກທີ່ອື່ນ.

ຄ. ເປີດໂອກາດໃຫ້ຄົນໃນບ້ານນັ້ນປັບປຸງໝູນໃຊ້ພອນສະຫວັນທີ່ ພະເຈົ້າ ປະທານໃຫ້.

**45** ຖ້າວ່າຈະສອນຜູ້ນຳໃນບ້ານນັ້ນໃຫ້ເປັນນັກເທດ ເພິ່ນເລີ່ມຕົ້ນຮຽນຈາກຫຼັກສູດ ສ.ອ.ມ ນີ້ໄດ້.

ກ. ຄຣິດສະຕະຈັກໃໝ່ສົມຄວນຈະຊອກຫາຜູ້ນຳຖາວອນຈາກໃສ? ___________________

ຂ. ແມ່ນຜູ້ໃດທີ່ອາດຈະສອນເຂົາໄດ້? ____________________________________

ຄ. ເຂົາອາດຈະສອນຈາກຫຼັກສູດໃດໄດ້? __________________________________

**46** ການສອນສະມາຊິກທົ່ວໄປແລະການສັ່ງສອນຜູ້ນຳຈະແຕກຕ່າງກັນຢ່າງໃດ? (ເລືອກ)

ກ. ການສອນລູກສິດຜູ້ເຊື່ອໃໝ່ກໍເພື່ອສະມາຊິກທຸກຄົນແຕ່ການສອນສະເພາະຜູ້ນຳຈະຮັບສອນແຕ່ຜູ້ທີ່ເປັນຄຣິດ ສະຕຽນຫຼາຍປີ.

ຂ. ການສອນລູກສິດກໍ່ເພື່ອຄຣິດສະຕຽນທຸກໆຄົນ ແຕ່ການສອນຜູ້ນຳເອົາແຕ່ຄົນທີ່ມີຂອງປະທານຈາກ ພະເຈົ້າ ມີ ຄວາມເຊື່ອໝັ້ນຢາກຮັບໃຊ້ພີ່ນ້ອງ.

ຄ. ໃຫ້ທຸກຄົນເປັນຜູ້ນຳໄດ້.

**47** ແມ່ນຫຼັກສູດໃດທີ່ເໝາະສົມທີ່ຈະສອນຄຣິດສະຕຽນໃໝ່ທຸກຄົນ? (ເລືອກ)

ກ. ສ.ອ.ນ. ນີ້

ຂ. ຊີວິດຢ່າງຄົບບໍລິບູນ.

ຄ. ບົດຮຽນສຳລັບຜູ້ທີ່ຢາກຮັບສົນບັບຕິສະມາ.

**48** ຈະເອົາຫຼັກສູດໃດຈຶ່ງເໝາະສົມສະເພາະເພື່ອພວກຜູ້ນຳ? _________________________

**49** ຈຸດປະສົງປະການສຸດທ້າຍໃນການຕັ້ງຄຣິດສະຕະຈັກໄວ້ຄື: ການຕຽມ _____(ຕື່ມຄວາມທີ່ຂາດ) ແລະອີກຫຼາຍຄົນ ເພື່ອຈະຊ່ວຍກັນໃນການຮັບໃຊ້ແລະປຶກສາຫາລືວຽກງານຄຣິດສະຕະຈັກນັ້ນຕາມທີ່ຖືກຕ້ອງ.

**50** ໃນຕະຫຼອດໝວດ 9 ແລະໝວດ 10 (ບົດທີ 22-25) ເຮົາໄດ້ຮຽນເລື່ອງການປ່າວປະກາດພະທຳໄປເຖິງທີ່ ສຸດປາຍແຜ່ນດິນໂລກທີ່ເລີ່ມຕົ້ນກັບ

ກ. ຄອບຄົວໃຜ? ________________________________________________

ຂ. ແລ້ວບ້ານໃດ? _______________________________________________

ຄ. ຢູ່ໃນແຂວງຂອງໃຜ? ___________________________________________

ງ. ປະເທດໃດ? ______________________________ ແລ້ວໄປເຖິງທີ່ສຸດແຜ່ນດິນໂລກ.

**51** ຖ້າວ່າຈະເລີ່ມຕົ້ນຄຣິດສະຕະຈັກໃໝ່ມີບາດກ້າວ 4 ປະການໃດແດ່?

1. ______________________________ 2.______________________________

3. ______________________________ 4.______________________________

*ເມື່ອຍບໍ່! ທ່ານໄດ້ຮຽນຫຼັກສູດອີກເຫຼັ້ມ ໜຶ່ງໄດ້ສຳເລັດແລ້ວ ຕໍ່ໄປຫວັງວ່າທ່ານຈະກັບມາຮຽນເຫຼັ້ມທີ 4 ດ້ວຍ. ຖ້າວ່າທ່ານມີເວລາວ່າງ ຈຶ່ງຮຽນຄືນເຫຼັ້ມທີ 1 ຫາ ເຫຼັ້ມທີ 3 ກ່ອນຈະເລີ່ມຕົ້ນເຫຼັ້ມທີ 4 ແລະມີອີກຫຼັກສູດໜຶ່ງດ້ວຍທີ່ທ່ານອາດຈະຮຽນໃນໂອກາດນີ້ໄດ້ຄື: "ວິທີການເທດສະໜາ"*

*ຂໍໃຫ້ອ້ອນວອນຕໍ່ ພະເຈົ້າ ໃຫ້ຫຼັກສູດນີ້ເກີດດອກອອກຜົນໃນຊີວິດຂອງທ່ານຜູ້ຮຽນແລະໃຫ້ຂ່າວປະເສີດຂອງ ພະເຢຊູແຜ່ຂະຫຍາຍອອກໄປຫຼາຍບ່ອນຫຼາຍທີ່.*

**ຄຳຕອບ:**

**1** *ຂ. ຖືກ*

**2** *ຖືກຕ້ອງເໝາະສົມທັງໝົດ*

**3** *ຕັ້ງຄຣິດສະຕະຈັກ.*

**4** *ກ. ໃຫ້ເຂົາມາເຂົາຮ່ວມປະຊຸມກັບຄຣິດສະຕຽນໃນບ້ານນັ້ນ.*
*ຂ. ຕັ້ງຄຣິດສະຕະຈັກໄວ້ໃນບ້ານເພື່ອເປັນທີ່ປະຊຸມ.*

**5** *ກ. ໃຫ້ຄົນຮັບເຊື່ອໃນພະເຢຊູ ແລ້ວໃຫ້ເຂົາມາເຂົາຮ່ວມປະຊຸມກັບຄຣິດສະຕຽນທີ່ມີຢູ່ໃນເຂດນັ້ນ.*
*ຂ. ໃຫ້ຄົນຮັບເຊື່ອໃນພະເຢຊູ ແລ້ວຕັ້ງ ຄຣິດສະຕະຈັກໄວ້ເພື່ອເປັນທີ່ປະຊຸມ.*

**6** *ກ. ຢູດາ ແລະ ຊາມາເລຍ. ຂ. ຢູດາ ແລະ ຊາມາເລຍ. ຄ. ປະກາດຂ່າວປະເສີດ.*

**7** *ກ. ຢູດາ ແລະ ຊາມາເລຍ. ຂ. ການຂົ່ມເຫັງ.*

**8** *ໄທເອທິໂອເປຍທີ່ເດີນທາງກັບ ຟີລິບ.*

**9** *ຢູດາ ແລະ ຊາມາເລຍ.*

**10** *ເອທິໂອເປຍ. ອາຟາລິກາ.*

**11** *ມາເກໂດເນຍ.*

**12** *ກ. ນູກໂທດ. ຂ. ປະກາດແລະສັ່ງສອນ.*

**13** *ກ. ການຂົ່ມເຫັງ ຂ. ຄົນເດີນທາງກັບ ຟີລິບ. ຄ. ໂປໂລ ກັບການນິມິດ.*
*ງ. ໂປໂລເປັນນັກໂທດທີ່ຖືກສົ່ງໄປ.*

**14** *ກ. ການຖືກຖຽງກັນ. ຂ. ບໍ່. ຄ. 4 ຄົນ.*

**15** *ກ. ບໍ່ແມ່ນ. ຂ. ເພາະການຖືກຖຽງກັນ. ຄ. ສອງ ເສັ້ນ ງ. ພະເຈົ້າ.*

**16** *ກ. ເຫັງ. ຂ. ທາງ. ຄ. ນິມິດ ງ. ນັກໂທດ. ຈ. ຖືກຖຽງ*

**17** *ກ. ງ.ແລະ ຈ.*

**18** *ກ. ມະນຸດ. ຂ. ມະນຸດ.*

**19** *ກ. ການຂົ່ມເຫັງ. ຂ. ການເດີນທາງ. ຄ. ການເຫັນນິມິດ. ງ. ການເປັນນັກໂທດ. ຈ. ການຖືກຖຽງກັນ.*

**20** *ຂ. ຖືກ*

**21** *ຄ. ຖືກ*

**22** *ກ. ມີ ຂ. ໜ້ອຍທີ່ສຸດ.*

**23** *ຂ. ແລະ ຄ. ຖືກ (ແຕ່ບໍ່ຕາຍຕົວ)*

**24** *ຄ. ຖືກ*

**25** *ຈ. ສ. ຊ. ແລະ ຍ. ຖືກ*

**26** *ຂ. ຖືກ*

**27** *ກ. ຂ. ງ. ແລະ ສ. ຖືກ*

**ຄຳຕອບ (ຕໍ່):**

**28** *ກ. ໂອກາດໄປປະຊຸມ. ຂ. ຄຣິດສະຕຽນ ຄ. ວິທະຍຸ. ງ. ຈິນວິນຍານ (ບໍ່ພໍໃຈກັບສາດສະໜາເກົ່າທີ່ຊ່ອຍໃຫ້ລອດພົ້ນບາບບໍ່ໄດ້)*

**29** *ກ. ລູກກຳພ້າ ແລະ ຍິງໝ້າຍ ຂ. ການປະຕິບັດ.*

**30** *ກ. ຮຽນພະຄຳພີປະຈຳເຮືອນ. ຂ. ທຳຄວາມລົ້ງເຄີຍ.*

**31** *ກ. ຄວນຈະຫາໃຫ້. ຂ. ຄວນຈະຫາໃຫ້.*

**32** *ກ. ຖືກກັບ 4. ຂ. ຖືກກັບ 1. ຄ. ຖືກກັບ 3. ງ. ຖືກກັບ 5. ຈ. ຖືກກັບ 2.*

**33** *ກ. ນະມັດສະການ. ຂ. ອາທິດ.*

**34** *ບາດກ້າວທີ 1 ຕັ້ງໄວ້ 2 ຕິດຕໍ່...ໃຜ*

**35** *ກ. ການໄດ້ຍິນ. ຂ. ເລື່ອງ ພະຄຣິດ.*

**36** *1. ທຸກຄົນເປັນຄົນບາບທີ່ ພະເຈົ້າຈະຕັດສິນລົງໂທດ.*

*2. ພະເຈົ້າ ຊົງຍຸດຕິທຳທັງຮັກເຮົາດ້ວຍ.*

*3. ພະເຢຊູ ຖືກຕັດສິນຮັບໂທດແທນເຮົາ.*

*4. ເຮົາຈະໄດ້ຊີວິດອັນຕະຫຼອດໄປເປັນນິດດ້ວຍເພິ່ງໃນ ພະເຢຊູ.*

**37** *ຮ້ອງຂໍໃຫ້ເຂົາມອບຕົວໄວ້ກັບ ພະເຢຊູ*

**38** *ຂ. ຖືກ*

**39** *ຂ. ຖືກ*

**40** *ເລີ່ມຕົ້ນສອນທັນທີ່ເວລາເຂົາເຊື່ອ*

**41** *ໃຫ້ເຂົາຈະເລີນກ້າວໜ້າຂຶ້ນໃນຊີວິດຄຣິດສະຕຽນ.*

**42** *1. ຕັ້ງໄວ້ຢູ່ໃສໄດ້. 2. ຕິດຕໍ່ກັບໃຜກ່ອນ.*

*3. ໃຫ້ຄຣິດສະຕຽນກ້າວໜ້າ. 4. ການຕຽມຜູ້ນຳ.*

**43** *ຄ. ຖືກ*

**44** *ທັງສາມຂໍ້ຖືກ ໝົດ.*

**45** *ກ. ຈາກພວກສະມາຊິກທີ່ກ້າວໜ້າຂອງເຂົາເອງ. ຂ. ຜູ້ມາຕັ້ງຄຣິດສະຕະຈັກກໍ່ໄດ້ ຫຼື ຜູ້ອື່ນທີ່ຊຳນານ. ຄ. ຈາກຫຼັກສູດ ສ.ອ.ນ ນີ້ກໍ່ໄດ້ (ເລີ້ມເຫຼັ້ມ I)*

**46** *ຂ. ຖືກ.*

**47** *ຂ. ແລະ ຄ. ຖືກ*

**48** *ສ.ອ.ນ.*

**49** *ຜູ້ນຳ.*

**50** *ກ. ຂອງເຮົາ. ຂ. ບ້ານເຮົາ. ຄ. ຂອງເຮົາ. ງ. ລາວ.*

**51** *1. ຈະຕັ້ງໄວ້ຢູ່ໃສ. 2. ຈະຕິດຕໍ່ກັບໃຜກ່ອນ.*

*3. ສ້າງໃຫ້ຄຣິດສະຕຽນກ້າວໜ້າ. 4. ການຕຽມຜູ້ນຳ.*